# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 8

## ການໂຄສະນາເຜີຍແຜ່ກົດໝາຍຜ່ານການທົດສອບຄວາມຮູ້ດ້ານກົດໝາຍ

## Advertising by the law examination

### 1. ຄວາມໝາຍ

ການໂຄສະນາເຜີຍແຜ່ກົດໝາຍ ຫຼື ນິຕິກຳ ຜ່ານການທົດສອບຄວາມຮູ້ດ້ານກົດໝາຍ ແມ່ນການຈັດກິດຈະກຳຕ່າງໆ ເພື່ອທົດສອບຄວາມຮູ້ດ້ານກົດໝາຍ ໂດຍອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ ແລະ ເອກະຊົນ ຊຶ່ງໃຫ້ຜູ້ທີ່ມີຄວາມສົນໃຈ ຕອບເປັນລາຍລັກອັກສອນ ຫຼື ປາກເປົ່າ ກ່ຽວກັບກົດໝາຍໃດໜຶ່ງ ແນໃສ່ຊຸກຍູ້, ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບກົດໝາຍ ໃຫ້ແກ່ພົນລະເມືອງ[1].

ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ການໂຄສະນາເຜີຍແຜ່ກົດໝາຍຜ່ານການທົດສອບຄວາມຮູ້ດ້ານການໝາຍ ແມ່ນຮູບການໂຄສະນາເຜີຍແຜ່ກົດໝາຍໂດຍອີງໃສ່ເອົາເປົ້າໝາຍທີ່ຕ້ອງການເປັນຫຼັກໃນການສະແດງຄຳຄິດເຫັນ ຫຼື ການຊອກຮູ້ເຂົ້າໃຈກົດໝາຍ, ສ້າງຄວາມກະຕືລືລົ້ນໃຫ້ຜູ້ຟັງເປັນເຈົ້າການໃນການຊອກຮູ້ ແລະ ທຳຄວາມເຂົ້າໃຈກົດໝາຍດ້ວຍຕົນເອງ, ຜ່ານການປະຕິບັດກິດຈະກຳຕ່າງໆໃນການທົດສອບຄວາມຮູ້ດ້ານກົດໝາຍສາມາດປະເມີນໄດ້ຄວາມຮັບຮູ້ ແລະ ເຂົ້າໃຈກົດໝາຍຈາກຜູ້ໄດ້ຮັບການທົດສອບຄວາມຮູ້ທາງດ້ານກົດໝາຍ.

### 2. ຄວາມສຳຄັນ ແລະ ຈຸດປະສົງ

ການທົດສອບຄວາມຮູ້ກົດໝາຍ ແມ່ນຮູບການເສັງທີ່ທາງອົງການຈັດຕັ້ງຂອງລັດເປັນຜູ້ຈັດຕັ້ງຂຶ້ນແນໃສ່ລະດົມ, ສົ່ງເສີມ, ຍົກສູງຄວາມຮັບຮູ້, ຄວາມເຂົ້າໃຈກ່ຽວກັບກົດໝາຍ, ຍົກສູງລະດັບວິຊາສະເພາະຂອງເປົ້າໝາຍ ແລະ ສະຕິກົດໝາຍຂອງພົນລະເມືອງເວົ້າລວມ.ການສອບເສັງຊອກຮູ້ກົດໝາຍແມ່ນໜຶ່ງໃນບັນດາການເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ, ແມ່ນຂົວຕໍ່ໃນການນຳເອົາເນື້ອໃນຕ່າງໆຂອງກົດໝາຍເຂົ້າສູ່ຊີວິດສັງຄົມ, ແມ່ນຮູບການຮ່ວມຊີວິດວັດທະນະທຳກົດໝາຍທີ່ມີຄວາມດູດດື່ມ ແລະ ມີປະສິດທິພາບ.

ການທົດສອບຄວາມຮູ້ດ້ານກົດໝາຍ ແມ່ນໜຶ່ງໃນບັນດາຮູບການໂຄສະນາເຜີຍແຜ່ນິຕິກຳທີ່ມີຄວາມສຳຄັນ ເພື່ອສ້າງຂະບວນການທີ່ດຶງດູດ ແລະ ຫັນປ່ຽນແນວຄິດໃຫ້ພົນລະເມືອງຫັນມາສົນໃຈຂະບວນການເຜີຍ ແຜ່ນິຕິກຳ ພ້ອມທັງເປັນການປະເມີນຄວາມຮັບຮູ້ດ້ານກົດໝາຍຂອງພົນລະເມືອງແຕ່ລະໄລຍະ.

[1]ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 15.

ບົດບາດສຳຄັນຂອງການທົດສອບຄວາມຮູ້ກົດໝາຍແມ່ນໜຶ່ງໃນບັນດາຮູບການ, ມາດຕະການໂຄສະນາ, ເຜີຍແຜ່ນິຕິກຳທີ່ດຶງດູດຄວາມສົນໃຈ, ມີປະສິດທິຜົນສູງ ແລະ ຖືກນຳໃຊ້ຫຼາຍ[2].

ດັ່ງນັ້ນ, ຈຶ່ງພໍສັງລວມໄດ້ວ່າ ຄວາມສຳຄັນໃນການໂຄສະນາເຜີຍແຜ່ກົດໝາຍ ຜ່ານການທົດສອບຄວາມຮູ້ດ້ານກົດໝາຍ ມີຄວາມສຳຄັນດັ່ງນີ້:

+ ສ້າງຄວາມກະຕືລືລົ້ນໃຫ້ທຸກເປົ້າໝາຍເອົາໃຈໃສ່ເປັນເຈົ້າການໃນການຊອກຮູ້ກົດໝາຍດ້ວຍຕົນເອງ;
+ ສາມາດປະເມີນຄວາມຮັບຮູ້ທາງດ້ານກົດໝາຍຂອງປະຊາຊົນຢ່າງມີວິທະຍາສາດ;
+ ສ້າງຄວາມດຶງດູດ ແລະ ສົນໃຈໃຫ້ປະຊາຊົນຢາກຮູ້ຢາກເຫັນບັນດາເນື້ອໃນຂໍ້ກຳນົດຂອງກົດໝາຍ.

ຈຸດປະສົງຕົ້ນຕໍໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການທົດສອບຄວາມຮູ້ດ້ານກົດໝາຍແມ່ນ:

1) ເພື່ອໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍໃດໜຶ່ງ ແບບສະເພາະ ເຈາະຈົງ;

2) ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ມີສ່ວນຮ່ວມ ກ່ຽວກັບກິດຈະກຳຖາມ-ຕອບ ຕໍ່ກັບເນື້ອໃນກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ນຳໄປເຜີຍແຜ່;

3) ທົດສອບ, ປະເມີນຄວາມຮັບຮູ້, ເຂົ້າໃຈ ຂອງຜູ້ເຂົ້າຮ່ວມກິດຈະກຳ.

### 3. ເປົ້າໝາຍການໂຄສະນາຂອງການສອບເສັງຄວາມຮູ້ດ້ານກົດໝາຍ

ແລ້ວແຕ່ຈຸດປະສົງ, ຄວາມຕ້ອງການ, ຂອບເຂດ, ຮູບການຂອງການເສັງ ແລະ ສະພາບເງື່ອນໄຂຕົວຈິງເປົ້າໝາຍການໂຄສະນາຂອງການສອບເສັງຄວາມຮູ້ດ້ານກົດໝາຍ ເບິ່ງລວມແລ້ວມີ 2 ກຸ່ມຕົ້ນຄື ຜູ້ເຂົ້າເສັງ ແລະ ຜູ້ຕິດຕາມການເສັງ.

#### 3.1. ຜູ້ເຂົ້າເສັງ

ຜູ້ເຂົ້າເສັງແມ່ນຜູ້ທີ່ມີຄວາມຕ້ອງການຊອກຮູ້ກົດໝາຍຊຶ່ງປະກອບມີ: ພະນັກງານ-ລັດຖະກອນ,ກຳມະກອນ, ຊາວກະສິກອນ, ປັນຍາຊົນ ແລະ ຊາວຜູ້ອອກແຮງງານອື່ນໆ. ນອກນີ້ກໍ່ຍັງມີທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ນັກໂທດ, ຄົນຕ່າງປະເທດຊຶ່ງເຂົາເຈົ້າເປັນຜູ້ປະຕິບັດເນື້ອໃນຂອງການສອບເສັງໂດຍກົງເຊັ່ນ ຕອບຄຳຖາມ, ສະແດງຄວາມຮັບຮູ້ຄວາມເຂົ້າໃຈກົດໝາຍ ແລະ ຄວາມສາມາດຂອງຕົນເອງໃນການນຳໃຊ້ກົດໝາຍເຂົ້າໃນການແກ້ໄຂສະຖານະການຕ່າງໆ ທີ່ເກີດຂຶ້ນຕົວຈິງໃນການດຳລົງຊີວິດປະຈຳວັນ (ດ້ວຍການຂຽນ ຫຼື ທາງປາກເປົ່າ). ຄຽງຄູ່ກັນນັ້ນ, ຜູ້ເຂົ້າຮ່ວມການສອບເສັງຍັງແມ່ນຜູ້ທີ່ໃກ້ຊິດຕິດແທດກັບຜູ້ເຂົ້າເສັງເຊັ່ນ ອ້າຍເອື້ອຍ, ນ້ອງຄີງ, ພໍ່, ແມ່, ລູກ, ຜົວ, ເມຍ, ເພື່ອນຮ່ວມງານ, ບຸກຄົນໃກ້ຄຽງ, ໝູ່ເພື່ອນ ... ເຖິງວ່າເຂົາເຈົ້າບໍ່ໄດ້ປະຕິບັດເນື້ອໃນຂອງການສອບເສັງໂດຍກົງແຕ່ເຂົາເຈົ້າກໍປະກອບສ່ວນເຂົ້າໃນຜົນສຳເລັດຂອງການສອບເສັງຊອກຮູ້ກົດໝາຍ. ບຸກຄົນເຫຼົ່ານີ້ກໍມີຄວາມຕ້ອງການຊອກຮູ້ກົດໝາຍຄືກັນກັບຜູ້ເຂົ້າເສັງ, ແຕ່ຍ້ອນເຫດຜົນໃດໜຶ່ງ (ບໍ່ຄົບເງື່ອນໄຂ, ບໍ່ມີເວລາ, ຄວາມຮູ້ຈຳກັດ, ຄຶດງຶ້ ຫຼື ພຽງແຕ່ຢາກສ້າງເງື່ອນໄຂໃຫ້ຄົນໃກ້ຊິດຂອງຕົນເຂົ້າເສັງໂດຍກົງແລ້ວກໍພໍ) ເຂົາເຈົ້າມີແຕ່

---

[2]ປອ ຈອມຄຳ ບຸບຜາລີວັນ, ປຶ້ມຄູ່ມື ວຽກງານໂຄສະນາເຜີຍແຜ່ກົດໝາຍ, 2008 ໜ້າ 39.

ເຂົ້າຮ່ວມການສອບເສັງໃນຖານະເປັນຜູ້ຊ່ວຍເຫຼືອ, ຜູ້ສະໜັບສະໜູນ, ເພື່ອນຮ່ວມງານ, ເສນາທິການໃຫ້ແກ່ຜູ້ເຂົ້າເສັງປະຕິບັດການສອບເສັງ.

**3.2. ຜູ້ຕິດຕາມການສອບເສັງ**

ແມ່ນຜູ້ທີ່ມີຄວາມຮັບຜິດຊອບຕິດຕາມ, ຄວບຄຸມ, ຊຸກຍູ້ ຫຼື ຈັດຕັ້ງການສອບເສັງ, ແຕ່ຍ້ອນຄວາມຢາກຮູ້ຢາກເຫັນ, ຍ້ອນຄວາມຕ້ອງການຊອກຮູ້ກົດໝາຍ, ຕິດຕາມເພື່ອຮູ້, ເພື່ອລະດົມກຳລັງໃຈຄົນໃກ້ຊິດ, ເພື່ອຮຽນຮູ້ປະສົບການ ... ເຂົາເຈົ້າຈຶ່ງເຂົ້າຮ່ວມການສອບເສັງໃນຖານະເປັນຜູ້ຕິດຕາມ.

ວິທີຕິດຕາມການສອບເສັງກໍມີຫຼາກຫຼາຍແລ້ວແຕ່ສະພາບ, ເງື່ອນໄຂຕົວຈິງແລະ ແຕ່ລະເປົ້າໝາຍລະອຽດເຊັ່ນ ຕິດຕາມຜ່ານພາຫະນະສື່ມວນຊົນ (ໂທລະພາບ, ວິທະຍຸ, ໂທລະໂຄ່ງ, ໜັງສືພິມ. ແຜ່ນພັບ, ຮູບພາບ, ເວບໄຊ.), ຜ່ານການແລກປ່ຽນຄຳຄິດຄຳເຫັນການໂຕ້ເວທີຖົກຖຽງກັບຄົນໃກ້ຊິດ, ເພື່ອນຮ່ວມງານ, ໝູ່ເພື່ອນ .... ນີ້ຄືເປົ້າໝາຍຂອງການໂຄສະນາທີ່ສຳຄັນໃນການເສັງຊອກຮູ້ກົດໝາຍ, ຖ້າການເສັງຫາກດຶງດູດຜູ້ເຂົ້າຮ່ວມຕິດຕາມຫຼາຍເທົ່າໃດກໍຈະເຮັດໃຫ້ມີຄວາມສຳເລັດດີ ແລະ ມີປະສິດທິຜົນສູງເທົ່ານັ້ນ.

**4. ການສ້າງແຜນການ**

**4.1. ການກະກຽມ ແລະ ວາງແຜນເບື້ອງຕົ້ນ**

ຄະນະຮັບຜິດຊອບ ຫຼື ພະນັກງານໂຄສະນາເຜີຍແຜ່ກົດໝາຍ ກ່ອນຈະຮ່າງແຜນໂຄສະນາເຜີຍແຜ່ກົດໝາຍຕ້ອງໄດ້ຄົ້ນຄວ້າຂໍ້ມູນເບື້ອງຕົ້ນ ດັ່ງນີ້:

- ກຳນົດຈຸດປະສົງ, ຄາດໝາຍ ຂອງການສອບເສັງ:ຄະນະຮັບຜິດຊອບໃນການສ້າງແຜນການເບື້ອງຕົ້ນຈະຕ້ອງເອົາໃຈໃສ່ໃນການກຳນົດຈຸດປະສົງຢ່າງມີໂລຊິກ, ພາວະວິໄສ ພ້ອມທັງຍົກໃຫ້ເຫັນຄາດໝາຍ ຫຼື ຜົນໄດ້ຮັບຈາກການສອບເສັງວ່າຈະໄດ້ຫຍັງແດ່? ເພື່ອເປັນພື້ນຖານໃນການກຳນົດເປົ້າໝາຍເຂົ້າຮ່ວມໃຫ້ສົມຄູ່ກັບຈຸດປະສົງ ແລະ ຄາດໝາຍ;
- ເປົ້າໝາຍທີ່ຈະເຂົ້າສອບເສັງ: ໃຫ້ກຳນົດໃຫ້ສອດຄ່ອງກັບຈຸດປະສົງ ແລະ ລະດັບຄາດໝາຍ, ຫຼີກລ້ຽງການກຳນົດເປົ້າໝາຍເຂົ້າຮ່ວມສອບເສັງທີ່ບໍ່ກ່ຽວກັບຂ້ອງກັບຈຸດປະສົງທີ່ຕ້ອງການ;
- ກຳນົດບຸກຄະລາກອນທີ່ຈະຈັດຕັ້ງປະຕິບັດ: ບຸກຄະລາກອນທີ່ຈະດຳເນີນການເຄື່ອນໄຫວຈັດຕັ້ງການສອບເສັງຕ້ອງໄດ້ກຳນົດໃຫ້ຈະແຈ້ງ ພ້ອມທັງແບ່ງຄວາມຮັບຜິດຊອບໄປຄຽງຄູ່ກັບແຕ່ລະຄົນທີ່ຮັບຜິດຊອບ;
- ເຄື່ອງມືຮັບໃຊ້: ເຄື່ອງມືຮັບໃຊ້ໃນການຈັດຕັ້ງການສອບເສັງ ເປັນຕົ້ນ: ບິກ, ສໍດຳ, ເຈ້ຍ...ຕ້ອງໄດ້ກະກຽມໃຫ້ແທດເໝາະກັບສະພາບການຕົວຈິງ;
- ງົບປະມານ: ເປັນປັດໃຈຫຼັກໃນການຈັດຕັ້ງການສອບເສັງ ຊຶ່ງຈະຕ້ອງກຳນົດເຂົ້າໃນແຜນການ:ຄ່າໃຊ້ຈ່າຍໃຫ້ຜູ້ບັນຍາຍ ( ຖ້າມີ ), ຄ່າອຸປະກອນຮັບໃຊ້, ຄ່ານ້ຳດື່ມ ແລະ ອາຫານຫວ່າງ, ຄ່າເຊົ່າສະຖານທີ່,...;
- ເກັບກຳຂໍ້ມູນ ແລະ ວິເຄາະຂໍ້ມູນ: ຄະນະຮັບຜິດຊອບຕ້ອງແບ່ງຄວາມຮັບຜິດຊອບໃນການເກັບກຳຂໍ້ມູນພ້ອມທັງວິເຄາະບັນຫາຕ່າງໆທີ່ຕິດພັນໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການສອບເສັງກົດໝາຍ ຫຼື ທົດສອບຄວາມຮູ້ທາງດ້ານກົດໝາຍ;

- ສ້າງກົດລະບຽບກ່ຽວກັບການທົດສອບຄວາມຮູ້ດ້ານກົດໝາຍ: ການສ້າງກົດລະບຽບມີຄວາມສຳຄັນຍິ່ງ, ຖ້າບໍ່ມີການສ້າງກົດລະບຽບຈະມີຄວາມສ່ຽງໃນການດຳເນີນໄປບໍ່ຖືກວິທີ ແລະ ຫຼັກການ;

- ອອກແບບເນື້ອໃນ, ວິທີການທົດສອບຄວາມຮູ້ດ້ານກົດໝາຍ: ຄະນະຮັບຜິດຊອບຈະກຳນົດເນື້ອໃນ, ວິທີການທົດສອບຄວາມຮູ້ດ້ານກົດໝາຍຕາມເນື້ອໃນຈິດໃຈ ແລະ ຈຸດປະສົງໃນການໂຄສະນາ;

- ແຕ່ງຕັ້ງຄະນະຮັບຜິດຊອບ: ການແຕ່ງຕັ້ງຄະນະຮັບຜິດຊອບຈະຕ້ອງສ້າງເປັນຂໍ້ຕົກລົງຄັກແດ່, ໂດຍອີງການທີ່ມີສິດອຳນາດເຊັນ, ໃນຂໍ້ຕົກລົງລະບຸບຸກຄົນ ແລະ ໜ້າວຽກລະອຽດ;

- ຄົ້ນຄວ້າ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ: ບັນຫານີ້ສຳຄັນ ເພື່ອໃຫ້ແຜນການຈັດຕັ້ງປະຕິບັດມີເນື້ອໃນຄົບຖ້ວນ ແລະ ເປັນເອກະພາບ.

**4.2. ການຂຽນ, ຜ່ານ ແລະ ສະເໜີຂໍອະນຸມັດແຜນທົດສອບຄວາມຮູ້ດ້ານກົດໝາຍ**

ຄະນະຮັບຜິດຊອບ ຫຼື ບຸກຄົນທີ່ຮັບຜິດຊອບຂຽນແຜນຕ້ອງອີງໃສ່ຜົນການວິເຄາະຂໍ້ມູນລວມທັງຄວາມອາດສາມາດດ້ານພາຫະນະ, ວັດຖຸປະກອນ, ເຄື່ອງມື, ບຸກຄະລາກອນ ແລະ ງົບປະມານຮັບໃຊ້ ເພື່ອຮັບປະກັນແຜນທີ່ຂຽນຂຶ້ນມານັ້ນ ສາມາດຈັດຕັ້ງປະຕິບັດ ບັນລຸຄາດໝາຍ, ສອດຄ່ອງກັບເປົ້າໝາຍ. ສຳລັບການຂຽນ ແຜນອາດຈະມອບໃຫ້ບຸກຄົນ ຫຼື ຄະນະຮັບຜິດຊອບຂຽນກໍໄດ້.

ທຸກແຜນການເຄື່ອນໄຫວສອບເສັງທົດສອບຄວາມຮູ້ດ້ານກົດໝາຍ ຄວນຜ່ານກອງປະຊຸມວິຊາການ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປຶກສາຫາລືໃຫ້ກົມກຽວ, ລະອຽດ ແລະ ຈະແຈ້ງ. ເມື່ອແຜນການເຄື່ອນໄຫວຜ່ານການຄົ້ນຄວ້າຢ່າງລະອຽດແລ້ວ ຕ້ອງໄດ້ນຳສະເໜີຂັ້ນເທິງພິຈາລະນາອະນຸມັດ.

**4.3. ການຈັດຕັ້ງປະຕິບັດແຜນ**

- ຮຽກໂຮມຄະນະຮັບຜິດຊອບເພື່ອແຈ້ງໃຫ້ຊາບ, ປຶກສາຫາລືແບ່ງຄວາມຮັບຜິດຊອບ: ຕ້ອງໄດ້ຈັດກອງປະຊຸມເຊີ່ງໜ້າໃນການປະກອບຄຳຄິດເຫັນ, ແບ່ງຄວາມຮັບຜິດຊອບວ່າໃຜຈະຮັບຜິດຊອບວຽກໃດຢ່າງເປັນເອກະພາບ, ກຳນົດແບບແຜນວິທີໃນການຈັດຕັ້ງປະຕິບັດ;

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ: ຕ້ອງໄດ້ມີການປະສານງານ ຫຼື ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ເປັນເອກະພາບ, ເອົາໃຈໃສ່ບໍ່ໃຫ້ມີເຫດການທີ່ບໍ່ເປັນເອກະພາບ ຊຶ່ງຈະນຳໄປສູ່ການຈັດຕັ້ງປະຕິບັດມີຄວາມຊັກຊ້າ, ບໍ່ມີຄຸນນະພາບເທົ່າທີ່ຄວນ;

- ເຄື່ອນໄຫວຈັດຕັ້ງປະຕິບັດແຜນຕົວຈິງ: ພາຍຫຼັງສຳເລັດກອງປະຊຸມແບ່ງຄວາມຮັບຜິດຊອບ, ເອກະພາບດ້ານການປະສານສົມທົບແລ້ວ ຈະຕ້ອງໄດ້ດຳເນີນການຈັດຕັ້ງປະຕິບັດໂດຍໄວ ແລະ ຖືກຕາມແຜນການທີ່ວາງໄວ້.

**4.4. ສະຫຼຸບ, ປະເມີນຜົນ ແລະ ລາຍງານ**

ພາຍຫຼັງສຳເລັດການຈັດຕັ້ງປະຕິບັດແຜນແລ້ວ ຄະນະຮັບຜິດຊອບ ຫຼື ພະນັກງານໂຄສະນາເຜີຍແຜ່ກົດໝາຍຕ້ອງໄດ້ສະຫຼຸບ, ສັງລວມຂໍ້ມູນຕ່າງໆ ພ້ອມທັງປະເມີນຜົນກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດແຜນຢ່າງຮອບດ້ານ ເພື່ອລາຍງານຂັ້ນເທິງຊາບ ແລະ ເປັນຂໍ້ມູນອ້າງອີງໃຫ້ແກ່ການຂຶ້ນແຜນສອບເສັງທົດສອບຄວາມຮູ້ດ້ານກົດໝາຍຄັ້ງຕໍ່ໄປໃຫ້ມີປະສິດທິພາບກວ່າເກົ່າ.

**5. ວິທີການສອບເສັງ ແລະ ທົດສອບຄວາມຮູ້ດ້ານກົດໝາຍ**

### 5.1. ການເສັງປາກເປົ່າ

ການເສັງປາກເປົ່າແມ່ນການເສັງຊຶ່ງໃນນັ້ນຜູ້ເຂົ້າເສັງຕ້ອງຕອບບັນດາຄຳຖາມຂອງຄະນະນຳມະການກ່ຽວກັບເນື້ອໃນຕ່າງໆ ຂອງກົດໝາຍໃດໜຶ່ງທາງປາກເປົ່າ.

### 5.2. ການເສັງຂຽນ

ການເສັງຂຽນແມ່ນການເສັງຊຶ່ງຜູ້ເຂົ້າເສັງ ຕ້ອງຕອບບັນດາຄຳຖາມກ່ຽວກັບເນື້ອໃນຕ່າງໆຂອງກົດໝາຍໃດໜຶ່ງທີ່ແນ່ນອນດ້ວຍການຂຽນຄວາມຮັບຮູ້, ຄວາມເຂົ້າໃຈຂອງຕົນຕໍ່ເນື້ອໃນຂອງກົດໝາຍນັ້ນລົງໃນໜ້າເຈ້ຍ

ການເສັງຂຽນຖືກນຳໃຊ້ໃນກໍລະນີທີ່ຕ້ອງການໂຄສະນາເຜີຍແຜ່ທາງກວ້າງເນື້ອໃນຕ່າງໆ ຂອງນິຕິກຳໃດໜຶ່ງທີ່ແນ່ນອນ, ຕົວຢ່າງ: ການເສັງວິຊາກົດໝາຍວ່າດ້ວຍການຈະລາຈອນທາງບົກ, ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ,ປະມວນກົດໝາຍແພ່ງ,ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດວ້ຍຄອບຄົວ ແລະ ກົດໝາຍອື່ນໆ.

### 5.3. ການເສັງປາຣາໄນ (ມີຫຼາຍຄຳຕອບໃຫ້ເລືອກ)

ການເສັງປາຣາໄນແມ່ນການເສັງຊຶ່ງຜູ້ເຂົ້າເສັງຕອບຄຳຖາມຕ່າງໆ ດ້ວຍການເລືອກເອົາຄຳຕອບທີ່ທາງຄະນະກຳມະການໄດ້ກະກຽມໄວ້ແລ້ວທີ່ເຫັນວ່າສອດຄ່ອງທີ່ສຸດ. ຈຸດດີຂອງຮູບການນີ້ແມ່ນໄວ, ກະທັດຮັດ ແລະ ບໍ່ເສຍເວລາຫຼາຍ, ແຕ່ຈຸດອ່ອນຂອງມັນມີຢູ່ບ່ອນວ່າຜູ້ຈັດຕັ້ງການເສັງຕ້ອງໃຊ້ສະຕິປັນຍາຫຼາຍໃນການກະກຽມຄຳຕອບຕ່າງໆ ການເສັງປາຣາໄນມີ 2 ຮູບການຄື:

ການເສັງເທິງໜ້າເຈ້ຍ ແລະ ການເສັງດ້ວຍເຄື່ອງເອເລັກໂຕຣນິກ.

ນອກຈາກນີ້, ກໍຍັງມີການເສັງຊອກຮູ້ກົດໝາຍດ້ວຍຮູບການອື່ນໆອີກເຊັ່ນ ໂດຍຜ່ານການສະແດງລະຄອນສັ້ນ (ລະຄອນຊາວບ້ານ), ໂດຍຜ່ານເຄື່ອງຄອມພິວເຕີ ...

### 5.4. ຈັດກິດຈະກຳຖາມ-ຕອບກ່ຽວກັບກົດໝາຍ

ກິດຈະກຳຖາມ-ຕອບກ່ຽວກັບກົດໝາຍ ແມ່ນໜຶ່ງໃນວິທີການໂຄສະນາເຜີຍແຜ່ກົດໝາຍ ຊຶ່ງສາມາດດຳເນີນ ໄດ້ດ້ວຍການຈັດເວທີຖາມ-ຕອບໂດຍກົງ ຫຼື ຕິດພັນກັບພິທີການໂຄສະນາປາຖະກະຖາອື່ນໃຫ້ແກ່ກຸ່ມເປົ້າໝາຍ ໃດໜຶ່ງທີ່ແນ່ນອນ. ນອກນັ້ນ, ຍັງສາມາດຈັດກິດຈະກຳດັ່ງກ່າວຜ່ານສື່ມວນຊົນໄດ້ຕາມວິທີການອັນເໝາະສົມ.

ບັນດາອົງການທີ່ຮັບຜິດຊອບໂຄສະນາເຜີຍແຜ່ກົດໝາຍ ສາມາດຈັດກິດຈະກຳຖາມ-ຕອບກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງໃຫ້ກຸ່ມເປົ້າໝາຍ.

### 5.5. ແບບປະເມີນ ແລະ ແບບສອບຖາມ

ການໃຊ້ແບບປະເມີນ ແລະ ແບບສອບຖາມ ແມ່ນການທົດສອບຄວາມຮູ້ທາງດ້ານກົດໝາຍອີກວິທີການໜຶ່ງ ຊຶ່ງອົງການທີ່ຮັບຜິດຊອບໂຄສະນາເຜີຍແຜ່ນິຕິກຳ ສາມາດສ້າງແບບປະເມີນ ແລະ ແບບສອບຖາມ ກ່ຽວກັບກົດໝາຍ ເພື່ອຮັບໃຊ້ໃຫ້ແກ່ວຽກງານໃດໜຶ່ງ ເຊັ່ນ ການຝຶກອົບຮົມ, ການໂຄສະນາເຜີຍແຜ່ນິຕິກຳທາງ ປາກເປົ່າ, ການສ້າງ ແລະ ຜະລິດສື່ໂຄສະນາເຜີຍແຜ່ນິຕິກຳ.

ການສ້າງແບບປະເມີນ ແລະ ແບບສອບຖາມກ່ຽວກັບກົດໝາຍ ສາມາດສ້າງຂຶ້ນໄດ້ດ້ວຍຫຼາຍວິທີຕາມຄວາມເໝາະສົມຂອງກຸ່ມເປົ້າໝາຍ ແລະ ອີງໃສ່ເງື່ອນໄຂຂອງອົງການທີ່ຮັບຜິດຊອບ ເຊັ່ນ ສ້າງເປັນຮູບແບບເຈ້ຍ ຫຼື ສ້າງເປັນຮູບແບບເອເລັກໂຕຣນິກ.

**6. ບັນດາວຽກງານທີ່ຈຳເປັນໃຫ້ແກ່ການສອບເສັງຄວາມຮູ້ດ້ານກົດໝາຍ**

ປົກກະຕິການສອບເສັງຄວາມຮູ້ດ້ານກົດໝາຍແຕ່ລະຄັ້ງມີ 3 ຂັ້ນຕອນ ແລະ ວຽກຕົ້ນຕໍດັ່ງນີ້:

**6.1. ຂັ້ນຕອນກະກຽມ:**

ຄະນະຮັບຜິດຊອບ ຕ້ອງໄດ້ປຶກສາຫາລືກຳນົດເປົ້າໝາຍ, ເລືອກວິທີການທົດສອບຄວາມຮູ້ດ້ານກົດໝາຍ, ປຸກລະດົມ, ໂຄສະນາຂະບວນການ, ປະກາດກົດລະບຽບ, ເນື້ອໃນ ແລະ ແນະນຳ.

- ສ້າງແຜນການຈັດຕັ້ງການສອບເສັງ;
- ແຕ່ງຕັ້ງຄະນະຈັດຕັ້ງການສອບເສັງ, ຄະນະກຳມະການໃຫ້ຄະແນນ;
- ສ້າງຄຳຖາມ ແລະ ກະກຽມຄຳຕອບໃຫ້ແກ່ການສອບເສັງ;
- ສ້າງລະບຽບການໃຫ້ຄະແນນ ແລະ ລະບຽບການສອບເສັງ.

**6.2. ຂັ້ນຕອນດຳເນີນການສອບເສັງ:**

ຄະນະຮັບຜິດຊອບ ຕ້ອງໄດ້ປະຕິບັດຕາມວິທີການທົດສອບຄວາມຮູ້ດ້ານກົດໝາຍ ທີ່ໄດ້ເລືອກໄວ້ໃນ ເບື້ອງຕົ້ນ ພ້ອມທັງແຈ້ງຄືນໂດຍຫຍໍ້ໃຫ້ຜູ້ເຂົ້າຮ່ວມທົດສອບ ເພື່ອໃຫ້ແນ່ໃຈວ່າຜູ້ເຂົ້າຮ່ວມເຂົ້າໃຈແຈ້ງຕໍ່ວິທີການ, ຫຼັງຈາກນັ້ນ ຈຶ່ງດຳເນີນການທົດສອບຄວາມຮູ້ທາງດ້ານກົດໝາຍຕາມວິທີການທີ່ໄດ້ກຳນົດໄວ້.

- ປຸກລະດົມຂະບວນການສອບເສັງ ແລະ ປະກາດກົດລະບຽບ, ເນື້ອໃນ ຫຼື ຄຳຖາມຂອງການເສັງ;
- ໂຄສະນາກ່ຽວກັບການສອບເສັງ;
- ແນະນຳ, ຕິດຕາມ, ຊຸກຍູ້ການຜັນຂະຫຍາຍເນື້ອໃນການສອບເສັງ;
- ຈັດຕັ້ງການເສັງ ແລະ ໃຫ້ຄະແນນ.

**6.3. ຂັ້ນຕອນສະຫຼຸບການສອບເສັງ.**

ການສະຫຼຸບຜົນການສອບເສັງເປັນວຽກສຸດທ້າຍຂອງຄະນະກຳມະການຈັດຕັ້ງແນໃສ່ຕີລາຄາຮອບດ້ານຜົນຂອງການເສັງ, ຖອດຖອນບົດຮຽນກ່ຽວກັບວິທີຈັດຕັ້ງ ແລະ ການຜັນຂະຫຍາຍແຜນການເສັງ, ຈາກນັ້ນກໍເສີມຂະຫຍາຍຜົນຂອງການເສັງໃນວຽກງານເຜີຍແຜ່ກົດໝາຍ, ວາງທິດທາງໃຫ້ແກ່ການຈັດຕັ້ງການເສັງໃນຄັ້ງຕໍ່ໄປ, ພ້ອມກັນນັ້ນກໍມອບລາງວັນໃຫ້ແຕ່ລະປະເພດ. ຜົນຂອງການເສັງຈະຕ້ອງປະກາດຢ່າງກວ້າງຂວາງດ້ວຍຫຼາຍຮູບການເຊັ່ນຈັດຕັ້ງພິທີສະຫຼຸບແລະມອບລາງວັນ, ປະກາດທາງພາຫະນະສື່ມວນຊົນເພື່ອແນໃສ່ທັງເສີມຂະຫຍາຍຜົນຂອງການເສັງ, ລະດົມຜູ້ເຂົ້າຮ່ວມການເສັງ, ທັງເປັນການສົ່ງເສີມ, ລະດົມກາລັງໃຈປະຊາຊົນຊອກຮູ້ກົດໝາຍ ແລະ ປະຕິບັດກົດໝາຍ.

ຄະນະຮັບຜິດຊອບ ຈະທົດສອບຄວາມຮູ້ດ້ານກົດໝາຍດ້ວຍວິທີໃດກໍຕາມ ພາຍຫຼັງດຳເນີນການທົດສອບ ຫຼື ສອບເສັງສຳເລັດແລ້ວ ຕ້ອງໄດ້ປະເມີນຜົນການສອບເສັງດ້ວຍວິທີການທີ່ເໝາະສົມ ພ້ອມທັງສະຫຼຸບຜົນການສອບເສັງນັ້ນຢ່າງລະອຽດ.

## References:


1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
2. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
3. ປຶ້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
4. ປອ. ຈອມຄຳບຸບຜາລີວັນ, ປຶ້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008.